ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກວດກາສູນກາງພັກ

ເລກທີ 398 /ຄກສພ

ນະຄອນຫຼວງວຽງຈັນ, ວັນທີ 26 ກັນຍາ 2019

# ຂໍ້ກຳນົດ

## ວ່າດ້ວຍການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ

- ອີງຕາມ ກົດລະບຽບຂອງພັກ ປະຊາຊົນປະຕິວັດລາວ ສະໄໝທີ X, ໝວດທີ X, ມາດຕາ 46, ຂໍ້ 6;
- ອີງຕາມ ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ເລກທີ 05/ສພຊ, ລົງວັນທີ 09 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ເລກທີ 27/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 021/ກມສພ, ລົງວັນທີ 27 ທັນວາ 2016 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກວດກາສູນກາງພັກ.

### ຄະນະກວດກາສູນກາງພັກ ອອກຂໍ້ກຳນົດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຄົ້ນຄ້ວາພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ຕໍ່ການຈັດຕັ້ງພັກ ແລະ ສະມາຊິກພັກ, ຄຳສະເໜີ ຕໍ່ອົງການບໍລິຫານລັດ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ອື່ນໆຂອງລັດ ໃຫ້ຖືກຕ້ອງຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

ເພື່ອຮັບປະກັນ ຄວາມເປັນເອກະພາບຂອງ ຄະນະກວດກາພັກ, ອົງການກວດກາລັດ ແຕ່ລະຂັ້ນໃນການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ-ຮ້ອງທຸກ ແລະ ຄຳສະເໜີ.

ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ອື່ນໆຂອງລັດ ແລະ ພົນລະເມືອງ.

**ມາດຕາ 2 ຄວາມໝາຍຂອງຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

ຄຳຮ້ອງຟ້ອງຕໍ່ການຈັດຕັ້ງພັກ-ສະມາຊິກພັກ: ແມ່ນຄຳຮ້ອງທີ່ເປັນລາຍລັກອັກສອນຂອງການຈັດຕັ້ງ, ສະມາຊິກພັກ, ພະນັກງານ ແລະ ພົນລະເມືອງ ກ່ຽວກັບການຕົກລົງບັນຫາໃດໜຶ່ງຂອງຄະນະ

ພັກ, ການກະທຳຂອງສະມາຊິກພັກ ທີ່ຜູ້ຮ້ອງຟ້ອງເຫັນວ່າເປັນການລະເມີດມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບຂອງພັກ, ກົດໝາຍ, ລະບຽບການຕ່າງໆຂອງລັດ ແລະ ບໍ່ພໍໃຈຕໍ່ການຕົກລົງບັນຫາຕ່າງໆຕໍ່ຕົນເອງ.

ຄຳຮ້ອງທຸກຂອງການຈັດຕັ້ງພັກ-ສະມາຊິກພັກ: ແມ່ນຄຳຮ້ອງທີ່ເປັນລາຍລັກອັກສອນຂອງການຈັດຕັ້ງພັກ, ສະມາຊິກພັກ ກ່ຽວກັບການຕົກລົງວິໄນ ຕໍ່ການຈັດຕັ້ງພັກ ຫຼື ສະມາຊິກພັກ, ຊຶ່ງຜູ້ຮ້ອງທຸກເຫັນວ່າບໍ່ມີຄວາມເປັນທຳ ແລະ ບໍ່ຖືກຕ້ອງຕາມກົດລະບຽບຂອງພັກ.

ຄຳສະເໜີຕໍ່ອົງການບໍລິຫານລັດ: ແມ່ນເອກະສານຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຍື່ນຕໍ່ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ເພື່ອພິຈາລະນາແກ້ໄຂ ກ່ຽວກັບການກະທຳ, ການຕົກລົງຂອງບຸກຄົນ, ການຈັດຕັ້ງໃດໜຶ່ງ ທີ່ເຫັນວ່າເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ (ມາດຕາ 2 ຂອງກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ).

**ມາດຕາ 3 ຫຼັກການກ່ຽວກັບການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

1. ການຄົ້ນຄວ້າພິຈາລະນາແກ້ໄຂ ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ຖືກຕ້ອງສອດຄ່ອງກັບຄວາມເປັນຈິງ;
2. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ສະເໝີພາບຕໍ່ໜ້າກົດໝາຍ, ເປີດເຜີຍ, ຍຸຕິທຳ, ດຳເນີນຢ່າງຮອບດ້ານ, ພາວະວິໄສ, ໂປ່ງໃສ ແລະ ທັນກັບເວລາທີ່ໄດ້ກຳນົດໃນກົດໝາຍ;
3. ການສະໜອງຂໍ້ມູນ, ຫຼັກຖານຕ້ອງຄົບຖ້ວນ, ຊັດເຈນ ແລະ ໄດ້ຮັບການຮ່ວມມື, ອຳນວຍຄວາມສະດວກ ຈາກບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃຫ້ແກ່ການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ;
4. ຕ້ອງແຈ້ງຜົນຂອງການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ໃຫ້ແກ່ການຈັດຕັ້ງ, ບຸກຄົນທີ່ຖືກຮ້ອງຟ້ອງ ແລະ ເຈົ້າຂອງຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ຊາບຢ່າງເປັນລາຍລັກອັກສອນ;
5. ການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ຕ້ອງຈັດຕັ້ງປະຕິບັດເປັນໝູ່ຄະນະຢ່າງເຂັ້ມງວດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ກຳນົດສະບັບນີ້ ນຳໃຊ້ສຳລັບສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ; ຜູ້ທີ່ຖືກຮ້ອງຟ້ອງ, ຖືກຮ້ອງທຸກ, ຖືກສະເໜີ ແລະ ການຈັດຕັ້ງທີ່ເຮັດໜ້າທີ່ໃນການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ.

## ໝວດທີ II
## ການຮັບຕ້ອນ, ການຍື່ນ, ປະເພດຄຳຮ້ອງທີ່ຮັບ ແລະ ບໍ່ຮັບຄົ້ນຄວ້າພິຈາລະນາ

**ມາດຕາ 5 ການຮັບຕ້ອນຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ**

1. ຄະນະກວດກາພັກ ແລະ ອົງການກວດກາລັດແຕ່ລະຂັ້ນ, ແຕ່ລະຂະແໜງການ ຕ້ອງຈັດຕັ້ງພະນັກງານ ເພື່ອຮັບຕ້ອນສະມາຊິກພັກ, ພະນັກງານ, ພົນລະເມືອງຊັ້ນຄົນຕ່າງໆ, ຜູ້ຍື່ນຄຳຮ້ອງຟ້ອງ, ຮ້ອງທຸກ, ຜູ້ສະເໜີ ຫຼື ຜູ້ລາຍງານ ກ່ຽວກັບບັນຫາຕ່າງໆ ທີ່ພົວພັນເຖິງຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
2. ສຳລັບຜູ້ເປັນພະນັກງານການນຳຂອງພັກ, ລັດ ແລະ ຂອງອົງການຈັດຕັ້ງຕ່າງໆ ແຕ່ລະຂັ້ນຕ້ອງ

ຈັດເວລາຮັບຕ້ອນຜູ້ມາຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ. ການຮັບຕ້ອນໃຫ້ຈັດຢູ່ສະຖານທີ່ສຳນັກງານອົງການ ແລະ ໃນໂມງລັດຖະການເທົ່ານັ້ນ;

3. ພະນັກງານທີ່ຮັບຕ້ອນ ຜູ້ມາຮ້ອງຟ້ອງ, ຮ້ອງທຸກ ແລະ ມາສະເໜີ ຕ້ອງເຮັດບົດບັນທຶກເນື້ອໃນການລາຍງານແຕ່ລະຄັ້ງເປັນລາຍລັກອັກສອນໄວ້. ນອກຈາກຮັບຕ້ອນແລ້ວ ຍັງຕ້ອງໃຫ້ຄຳປຶກສາ, ແນະນຳ, ອະທິບາຍທາງດ້ານກົດໝາຍ ແລະ ລະບຽບການຕ່າງໆ ໃຫ້ຜູ້ເຂົ້າມາຍື່ນຄຳຮ້ອງ ແລະ ມາພົບໄດ້ຮັບຮູ້ເຂົ້າໃຈຕື່ມ.

**ມາດຕາ 6 ການຍື່ນຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

1. ຄຳຮ້ອງຟ້ອງ ຕໍ່ການຈັດຕັ້ງພັກ, ສະມາຊິກພັກ ຕ້ອງຍື່ນຕໍ່ຄະນະພັກ ຫຼື ຄະນະກວດກາພັກທີ່ມີໜ້າທີ່, ສິດກ່ຽວຂ້ອງ ໃນການຄົ້ນຄວ້າພິຈາລະນາແກ້ໄຂ;

2. ຄຳຮ້ອງທຸກຂອງການຈັດຕັ້ງພັກ ຫຼື ສະມາຊິກພັກ ກ່ຽວກັບການລົງວິໄນຂອງພັກ ຕ້ອງຍື່ນຕໍ່ຄະນະພັກ ຫຼື ຄະນະກວດກາພັກ ທີ່ມີໜ້າທີ່, ສິດ ໃນການຄົ້ນຄວ້າພິຈາລະນາແກ້ໄຂ;

3. ຄຳສະເໜີຂອງການຈັດຕັ້ງ ຫຼື ພົນລະເມືອງ ຕ້ອງຍື່ນຕໍ່ອົງການບໍລິຫານລັດ ຫຼື ອົງການກວດກາລັດ ທີ່ມີໜ້າທີ່, ສິດ ໃນການຄົ້ນຄວ້າພິຈາລະນາແກ້ໄຂ.

**ມາດຕາ 7 ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ຮັບຄົ້ນຄວ້າພິຈາລະນາແກ້ໄຂ**

1. ຄຳຮ້ອງຟ້ອງ ທີ່ມີເນື້ອໃນພົວພັນເຖິງການປະຕິບັດມະຕິ, ຄຳສັ່ງ, ກົດລະບຽບພັກ, ກົດໝາຍຂອງລັດ, ພາລະບົດບາດ, ໜ້າທີ່, ສິດ ຂອງການຈັດຕັ້ງພັກ ແລະ ສະມາຊິກພັກ;

2. ຄຳຮ້ອງທຸກ ທີ່ມີເນື້ອໃນພົວພັນເຖິງການຕົກລົງວິໄນ ຕໍ່ການຈັດຕັ້ງພັກ ແລະ ສະມາຊິກພັກ;

3. ຄຳສະເໜີ ທີ່ມີເນື້ອໃນບໍ່ພໍໃຈຕໍ່ກັບການຕົກລົງ, ການປະຕິບັດພາລະບົດບາດ, ໜ້າທີ່, ສິດ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງອົງການບໍລິຫານລັດ, ລັດວິສາຫະກິດ, ລັດວິສາຫະກິດປະສົມ;

4. ຄຳສະເໜີ ທີ່ມີເນື້ອໃນ ບໍ່ພໍໃຈຕໍ່ການຕົກລົງວິໄນຂອງການຈັດຕັ້ງລັດ ແລະ ການດຳເນີນຄະດີຂອງການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ຕ່າງໆ ທີ່ເຫັນວ່າເປັນການລະເມີດກົດໝາຍ, ລະບຽບການຕ່າງໆຂອງລັດ ແລະ ບໍ່ຖືກຕ້ອງຕາມຄວາມ ເປັນຈິງ;

5. ຄຳສະເໜີ ຂອງພົນລະເມືອງທີ່ມີເນື້ອໃນບໍ່ພໍໃຈ ຕໍ່ການປະຕິບັດໜ້າທີ່ ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ເຫັນວ່າເປັນການລະເມີດກົດໝາຍ ແລະ ລະບຽບການຕ່າງໆ;

6. ຄຳສະເໜີຕໍ່ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານລັດວິສະຫະກິດປະສົມ, ນາຍບ້ານ ທີ່ສວຍໃຊ້ໜ້າທີ່, ສິດອຳນາດ ແລະ ຖານະຕຳແໜ່ງ ເກີນຂອບເຂດ, ສໍ້ລາດບັງຫຼວງ, ລະເມີດກົດໝາຍ ແລະ ລະບຽບການຂອງລັດ;

7. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ຜ່ານການຄົ້ນຄວ້າພິຈາລະນາແກ້ໄຂຂອງຂັ້ນລຸ່ມຖັດຕົນໄດ້ຕົກລົງແກ້ໄຂ, ແຕ່ຜູ້ສະເໜີ ຍັງເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ພໍໃຈ;

8. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ບໍ່ມີລາຍເຊັນ, ແຕ່ມີເນື້ອໃນ, ມີຂໍ້ມູນທີ່ໜ້າເຊື່ອຖືວ່າ ເປັນການລະເມີດກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ເປັນການສໍ້ລາດບັງຫຼວງ.

**ມາດຕາ 8 ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ບໍ່ຮັບພິຈາລະນາແກ້ໄຂ**

1. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ໝົດອາຍຸຄວາມໃນການຮ້ອງຟ້ອງ, ຮ້ອງທຸກ ແລະ ສະເໜີ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ;

2. ຄຳສະເໜີ ທີ່ໄດ້ເຂົ້າສູ່ຂະບວນການຍຸຕິທຳ, ໄດ້ມີຄຳຕັດສິນ ຫຼື ຄຳພິພາກສາຂອງສານແລ້ວ;

3. ຄຳສະເໜີ ຂອງຜູ້ທີ່ມີສຸຂະພາບຈິດບໍ່ສົມບູນ ທີ່ບໍ່ມີຜູ້ຕາງໜ້າຢ່າງຖືກຕ້ອງຕາມກົດໝາຍ;

4. ຄຳສະເໜີ ທີ່ມີເນື້ອໃນໃສ່ຮ້າຍປ້າຍສີ, ໂຄ່ນລົ້ມໂຈມຕີ ຕໍ່ແນວທາງນະໂຍບາຍຂອງພັກ;

5. ຄຳສະເໜີ ທີ່ມີເນື້ອໃນບໍ່ຄົບຖ້ວນ, ບໍ່ໜັກແໜ້ນ, ຂໍ້ມູນ, ຫຼັກຖານບໍ່ຮັດກຸມ;

6. ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ທີ່ບໍ່ທັນໄດ້ຜ່ານການຄົ້ນຄວ້າພິຈາລະນາແກ້ໄຂຈາກການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນລຸ່ມຖັດຕົນ;

7. ຄຳສະເໜີ ທີ່ເປັນຂໍ້ຂັດແຍ່ງລະຫວ່າງ ບຸກຄົນ ກັບ ບຸກຄົນ ຊຶ່ງບໍ່ກ່ຽວຂ້ອງກັບການປະຕິບັດໜ້າທີ່ຂອງການຈັດຕັ້ງ, ສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງລັດ.

## ໝວດທີ III
## ການຮັບ, ການຄົ້ນຄວ້າ ແລະ ດຳເນີນການກວດກາ

**ມາດຕາ 9 ການຮັບຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

- ການຮັບຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ຕ້ອງຮັບຜ່ານປະຕູດຽວ ລວມສູນຢູ່ໜ່ວຍງານຂາເຂົ້າ- ຂາອອກ ຂອງຄະນະກວດກາແຕ່ລະຂັ້ນ, ແຕ່ລະຂະແໜງການ;
- ກົມ, ພະແນກ, ຂະແໜງ ແລະ ໜ່ວຍງານ ທີ່ມີພາລະບົດບາດ, ໜ້າທີ່, ສິດ ໃນການຄົ້ນຄວ້າຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ຂອງຄະນະກວດກາແຕ່ລະຂັ້ນ ຕ້ອງມີການຈົດກ່າຍເລກທີຂາເຂົ້າ-ຂາອອກ, ວັນທີ, ເດືອນ, ປີຮັບ ແລະ ສົ່ງອອກໃຫ້ຈະແຈ້ງ;
- ກົມ, ພະແນກ, ຂະແໜງ ແລະ ໜ່ວຍງານຮັບຕ້ອນ ແລະ ໃຫ້ຄຳປຶກສາ ຕ້ອງຈົດກ່າຍ ແລະ ບັນທຶກໃຫ້ລະອຽດຕໍ່ກັບເນື້ອໃນການລາຍງານ, ການໃຫ້ການ ຫຼື ໃຫ້ຄຳຊີ້ແຈງ ຂອງຜູ້ມາຍື່ນຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ມາສະເໜີ ເພື່ອລາຍງານເປັນລາຍລັກອັກສອນໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາແກ້ໄຂ;

**ມາດຕາ 10 ການຄົ້ນຄວ້າພິຈາລະນາຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

- ພາຍຫຼັງໄດ້ຮັບຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ພະນັກງານທີ່ຮັບຜິດຊອບຕ້ອງໄດ້ຄົ້ນຄວ້າຄຳຮ້ອງເບື້ອງຕົ້ນ ໂດຍສັງລວມຫຍໍ້ກ່ຽວກັບຈຸດປະສົງ, ເນື້ອໃນ, ເປົ້າໝາຍ, ຂໍ້ຂັດແຍ່ງ, ການແກ້ໄຂຜ່ານມາຂອງຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ໃຫ້ຈະແຈ້ງ ເພື່ອລາຍງານຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ. ຫລັງຈາກນັ້ນ ບັນຫາໃດ, ປະເດັນໃດ ທີ່ບໍ່ທັນຈະແຈ້ງ ຫຼື ຂັ້ນຕອນຂອງການປະກອບເອກະສານ ແລະ ການຕອບສະໜອງຂໍ້ມູນ, ຫຼັກຖານຍັງບໍ່ຄົບຖ້ວນ ກໍສາມາດຮຽກເຊີນເຈົ້າຂອງຄຳຮ້ອງມາລາຍງານໃຫ້ຄຳຊີ້ແຈງ, ສະໜອງຂໍ້ມູນ, ຫຼັກຖານເພີ່ມເຕີມໃຫ້ຄົບຖ້ວນ ພ້ອມທັງເຮັດບົດບັນທຶກໄວ້ເປັນຫຼັກຖານ ແລ້ວລາຍງານຫຍໍ້ໃຫ້ການຈັດຕັ້ງ ແລະ ຂັ້ນເທິງຂອງຕົນ;
- ພາຍຫຼັງທີ່ການຈັດຕັ້ງ ແລະ ຂັ້ນເທິງ ໄດ້ຮັບບົດລາຍງານຫຍໍ້ຂອງວິຊາການແລ້ວ ຕ້ອງນຳເອົາ ແລະ ພິຈາລະນາ ພາຍໃນ 15 ວັນ ລັດຖະການ ພ້ອມທັງມີທິດຊີ້ນຳ ການເກັບກຳຂໍ້ມູນຫຼັກຖານ, ການຕິດຕາມກວດກາ ແລະ ການພິຈາລະນາວິທີການແກ້ໄຂໃຫ້ຖືກຕ້ອງຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

**ມາດຕາ 11 ການດຳເນີນການກວດກາຕາມຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

1. ຜູ້ຕົກລົງກວດກາມີ:

- ດ້ານພັກ: ເລຂາຄະນະພັກ, ປະທານຄະນະກວດກາ ແຕ່ລະຂັ້ນ ຕາມຂອບເຂດສິດຂອງຕົນ;
- ດ້ານລັດ: ນາຍົກລັດຖະມົນຕີ, ປະທານ ອົງການກວດກາລັດຖະບານ, ລັດຖະມົນຕີ ຫຼື ຫົວໜ້າອົງການທຽບເທົ່າ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານ ອົງການກວດກາລັດແຕ່ລະຂັ້ນ (ມາດຕາ 17 ຂອງກົດໝາຍວ່າດ້ວຍການກວດກາລັດ).

2. ການກະກຽມການກວດກາ:

- ແຕ່ງຕັ້ງຄະນະກວດກາ ຫຼື ໜ່ວຍງານກວດກາ ຫຼື ພະນັກງານກວດກາ;

- ຄົ້ນຄວ້າຂໍ້ມູນ, ເອກະສານ, ຫຼັກຖານ, ສ້າງແຜນການ, ຮ່າງຄຳຖາມເຈາະຈີ້ມ, ຮ່າງບົດບັນທຶກ, ກຽມໂຄງຮ່າງບົດລາຍງານ ແລະ ຕາຕະລາງເຄື່ອນໄຫວລະອຽດແຕ່ລະໄລຍະ;

- ກະກຽມເອກະສານນິຕິກຳອື່ນໆ ທີ່ພົວພັນກັບການກວດກາ, ງົບປະມານ, ພາຫະນະ, ວັດຖຸອຸປະກອນຮັບໃຊ້ທີ່ຈຳເປັນ;

- ຈັດຕັ້ງເຊື່ອມຊຶມ, ແນະນຳພະນັກງານທີ່ຈະໄປກວດກາໃຫ້ກຳແໜ້ນຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນຂອງການກວດກາ, ລະບຽບການພາຍໃນຂອງຄະນະກວດກາ ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຄົນໃນຄະນະກວດກາ.

3. ການດຳເນີນການກວດກາ:

- ແຈ້ງຂໍ້ຕົກລົງ, ແຜນການ, ຕາຕະລາງເຄື່ອນໄຫວເກັບກຳຂໍ້ມູນ, ຫຼັກຖານ ຕໍ່ການຈັດຕັ້ງ ແລະ ເປົ້າໝາຍທີ່ຖືກກວດກາ;

- ດຳເນີນການກວດກາຕາມແຜນການ;

- ເຮັດບົດບັນທຶກ ແລະ ບົດສະຫຼຸບຜົນການກວດກາ;

- ລາຍງານຂໍທິດຊີ້ນຳຈາກຂັ້ນເທິງຂອງຕົນ.

4. ສະຫຼຸບຜົນການກວດກາ:

- ສັງລວມເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆ, ບົດບັນທຶກທີ່ໄດ້ກວດກາມາເປັນບົດສະຫຼຸບຜົນຂອງການກວດກາ;

- ຕີລາຄາໄຈ້ແຍກຂໍ້ມູນ, ຫຼັກຖານໃຫ້ລະອຽດຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຄວາມຖືກ, ຄວາມຜິດຂອງເປົ້າໝາຍທີ່ຖືກກວດກາ ແລະ ສະເໜີມາດຕະການ, ວິທີການແກ້ໄຂ ຕາມກົດໝາຍ;

- ຜ່ານຮ່າງບົດສະຫຼຸບຜົນການກວດກາພາຍໃນຄະນະກວດກາ ແລ້ວສົ່ງຮ່າງບົດສະຫຼຸບດັ່ງກ່າວໃຫ້ຫົວໜ້າອົງການຈັດຕັ້ງຂອງເປົ້າໝາຍທີ່ຖືກກວດກາ ເພື່ອມີຄຳເຫັນ ແລະ ຢັ້ງຢືນ;

- ຄະນະກວດກາ ແລະ ຫົວໜ້າອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາ ລົງລາຍເຊັນໃສ່ບົດສະຫຼຸບເພື່ອຢັ້ງຢືນຜົນຂອງການກວດກາ.

5. ການລາຍງານຜົນການກວດກາ:

ພາຍຫຼັງສຳເລັດການກວດກາແລ້ວ ຄະນະກວດກາຕ້ອງສົ່ງບົດສະຫຼຸບຜົນການກວດກາ ແລະ ລາຍງານ ໃຫ້ຜູ້ອອກຂໍ້ຕົກລົງກວດກາ ພິຈາລະນາແກ້ໄຂ ຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

## ໝວດທີ IV
## ອົງການຈັດຕັ້ງ ແລະ ຂັ້ນຕອນການຄົ້ນຄວ້າພິຈາລະນາແກ້ໄຂ

**ມາດຕາ 12 ອົງການຈັດຕັ້ງຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

1. ຄະນະພັກ, ຄະນະປະຈຳ ແລະ ຄະນະກວດກາພັກແຕ່ລະຂັ້ນ ຄົ້ນຄວ້າພິຈາລະນາແກ້ໄຂ ຄຳຮ້ອງຟ້ອງ, ຮ້ອງທຸກ ທີ່ມີຕໍ່ການຈັດຕັ້ງພັກ ແລະ ສະມາຊິກພັກ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

2. ອົງການບໍລິຫານລັດ, ຂະແໜງການ ແລະ ອົງການກວດກາລັດແຕ່ລະຂັ້ນ ຄົ້ນຄວ້າພິຈາລະນາຄຳສະເໜີ ທີ່ມີຕໍ່ອົງການບໍລິຫານລັດ, ພະນັກງານ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

**ມາດຕາ 13 ຂັ້ນຕອນການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ**

1. ຄະນະພັກຮາກຖານ ຫຼື ໜ່ວຍພັກ, ອົງການປົກຄອງຂັ້ນບ້ານ ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງ-ຄຳສະເໜີ ທີ່ບໍ່ພໍໃຈຕໍ່ການຕົກລົງຂອງການຈັດຕັ້ງພັກ, ການຕົກລົງທາງດ້ານບໍລິຫານຂອງອົງການປົກຄອງຂັ້ນບ້ານ, ຄວາມຮັບຜິດຊອບ, ການກະທຳຂອງນາຍບ້ານ, ຮອງນາຍບ້ານ, ບຸກຄົນ, ນິຕິບຸກຄົນ

ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ບ້ານດັ່ງກ່າວ. ພາຍຫຼັງຄົ້ນຄວ້າແກ້ໄຂແລ້ວ ຕ້ອງແຈ້ງຜົນຂອງການແກ້ໄຂໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ພາຍໃນເວລາ 7 ວັນ ລັດຖະການ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີ ການຈັດຕັ້ງພັກ, ອົງການປົກຄອງຂັ້ນບ້ານພິຈາລະນາແກ້ໄຂບໍ່ຖືກຕ້ອງຕາມກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ຄູ່ກໍລະນີຝ່າຍໃດໜຶ່ງຍັງບໍ່ພໍໃຈ ກໍ່ມີສິດສະເໜີຕໍ່ຄະນະພັກ, ອົງການປົກຄອງຂັ້ນເມືອງ ພິຈາລະນາແກ້ໄຂ;

2. ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາຂັ້ນເມືອງ ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງ-ຄຳສະເໜີ ທີ່ຜ່ານການແກ້ໄຂຈາກຂັ້ນບ້ານແລ້ວ ແລະ ຄຳສະເໜີ ທີ່ຍື່ນຫາຂັ້ນເມືອງໂດຍກົງ ຊຶ່ງບໍ່ພໍໃຈຕໍ່ຄຳຕົກລົງຂອງການຈັດຕັ້ງພັກ, ຄຳຕົກລົງທາງດ້ານບໍລິຫານຂອງອົງການປົກຄອງຂັ້ນເມືອງ, ຄວາມຮັບຜິດຊອບ, ການກະທຳຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ບຸກຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງເມືອງ, ບໍ່ພໍໃຈຕໍ່ການກະທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ເມືອງດັ່ງກ່າວ.

ຄະນະພັກ, ອົງການປົກຄອງຂັ້ນເມືອງ ມອບໃຫ້ຄະນະກວດກາພັກ ແລະ ອົງການກວດກາລັດຂັ້ນເມືອງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງກວດກາຄົ້ນຄວ້າ, ຂໍ້ມູນຫຼັກຖານຕົວຈິງ ແລ້ວສະເໜີໃຫ້ຄະນະພັກ ຫຼື ອົງການປົກຄອງຂັ້ນເມືອງ ພິຈາລະນາແກ້ໄຂ;

ຄະນະພັກ, ອົງການປົກຄອງຂັ້ນເມືອງ ອອກຄຳຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂແລ້ວ ແຈ້ງຜົນຂອງການແກ້ໄຂໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ພາຍໃນເວລາ 7 ວັນ ລັດຖະການ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີ ຄູ່ຄວາມຝ່າຍໃດໜຶ່ງບໍ່ພໍໃຈຕໍ່ການຕົກລົງແກ້ໄຂຂອງຂັ້ນເມືອງ ຕໍ່ກັບຄຳຮ້ອງ ແລະ ຄຳສະເໜີ ທີ່ໄດ້ຜ່ານການແກ້ໄຂຂອງຄະນະພັກຮາກຖານ ຫຼື ໜ່ວຍພັກ, ອົງການປົກຄອງຂັ້ນບ້ານແລ້ວ ຜູ້ກ່ຽວມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ; ສ່ວນຄຳຮ້ອງ ແລະ ຄຳສະເໜີ ທີ່ຍື່ນຕໍ່ອົງການປົກຄອງຂັ້ນເມືອງໂດຍກົງນັ້ນ ຜູ້ກ່ຽວມີສິດຍື່ນຕໍ່ຄະນະພັກ, ອົງການປົກຄອງຂັ້ນແຂວງ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂ;

3. ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາຂັ້ນແຂວງ ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງ-ຄຳສະເໜີ ທີ່ຜ່ານການແກ້ໄຂຈາກຂັ້ນເມືອງແລ້ວ ແລະ ຄຳສະເໜີ ທີ່ຍື່ນຫາຂັ້ນແຂວງໂດຍກົງ ຊຶ່ງບໍ່ພໍໃຈຕໍ່ຄຳຕົກລົງທາງດ້ານບໍລິຫານຂອງອົງການປົກຄອງຂັ້ນແຂວງ, ຄວາມຮັບຜິດຊອບ, ການກະທຳຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ບຸກຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງແຂວງ, ຂອງນະຄອນຫຼວງ, ບໍ່ພໍໃຈຕໍ່ ການກະທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ແຂວງ, ນະຄອນຫຼວງ ດັ່ງກ່າວ.

ຄະນະພັກ, ອົງການປົກຄອງຂັ້ນແຂວງ ມອບໃຫ້ຄະນະກວດກາພັກ, ອົງການກວດກາລັດຂັ້ນແຂວງ ສົມທົບກັບຂະແໜງການທີ່ກ່ຽວຂ້ອງກວດກາ, ຄົ້ນຄວ້າ, ຂໍ້ມູນຫຼັກຖານຕົວຈິງ ແລ້ວສະເໜີໃຫ້ຄະນະພັກ, ອົງການປົກຄອງຂັ້ນແຂວງ ພິຈາລະນາແກ້ໄຂ;

ຄະນະພັກ, ອົງການປົກຄອງຂັ້ນແຂວງ ອອກຄຳຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂແລ້ວ ແຈ້ງຜົນຂອງການແກ້ໄຂໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ພາຍໃນເວລາ 7 ວັນ ລັດຖະການ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີ ຄູ່ຄວາມຝ່າຍໃດໜຶ່ງບໍ່ພໍໃຈຕໍ່ການຕົກລົງແກ້ໄຂຂອງຂັ້ນແຂວງ ຕໍ່ກັບຄຳຮ້ອງ-ຄຳສະເໜີ ທີ່ໄດ້ຜ່ານການແກ້ໄຂຂອງຄະນະພັກ, ອົງການປົກຄອງຂັ້ນເມືອງແລ້ວ ຜູ້ກ່ຽວມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ສ່ວນຄຳຮ້ອງ ແລະ ຄຳສະເໜີ ທີ່ຍື່ນຕໍ່ອົງການປົງຄອງຂັ້ນແຂວງໂດຍກົງນັ້ນ ຜູ້ກ່ຽວມີສິດຍື່ນ

ຕໍ່ລັດຖະບານ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂ;

4. ລັດຖະບານ ຄົ້ນຄວ້າພິຈາລະນາແກ້ໄຂຄໍາຮ້ອງ-ຄໍາສະເໜີ ທີ່ຜ່ານການແກ້ໄຂຈາກຂັ້ນແຂວງແລ້ວ; ຄໍາຮ້ອງ ແລະ ຄໍາສະເໜີ ທີ່ຍື່ນຫາລັດຖະບານໂດຍກົງ ຊຶ່ງບໍ່ພໍໃຈຕໍ່ຂໍ້ຕົກລົງຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ຄວາມຮັບຜິດຊອບ, ການກະທໍາຂອງເລຂາຄະນະພັກ, ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ແລະ ບຸກຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ.

ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ລັດຖະບານ ມອບໃຫ້ຄະນະກວດກາສູນກາງພັກ, ອົງການກວດກາລັດຖະບານ ສົມທົບກັບຄະນະພັກ, ຄະນະນໍາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງທີ່ກ່ຽວຂ້ອງ ກວດກາ, ຄົ້ນຄວ້າ, ຂໍ້ມູນຫຼັກຖານຕົວຈິງ ແລ້ວສະເໜີໃຫ້ກົມການເມືອງ, ຄະນະເລຂາທິການສູນກາງພັກ, ລັດຖະບານ ພິຈາລະນາແກ້ໄຂ;

ພາຍຫຼັງຄົ້ນຄວ້າແກ້ໄຂແລ້ວ ຄະນະກວດກາສູນກາງພັກ, ອົງການກວດກາລັດຖະບານ ຕ້ອງແຈ້ງຜົນຂອງການແກ້ໄຂໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ພາຍໃນເວລາ 7 ວັນລັດຖະການ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີ ຄູ່ຄວາມຝ່າຍໃດໜຶ່ງບໍ່ພໍໃຈຕໍ່ການຕົກລົງແກ້ໄຂຂອງລັດຖະບານ ຜູ້ກ່ຽວມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ຫຼື ຮ້ອງຂໍຄວາມເປັນທໍາ ຕໍ່ຄະນະປະຈໍາ ສະພາແຫ່ງຊາດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

## ໝວດທີ V
## ໜ້າທີ່ ແລະ ສິດ ສໍາລັບຄະນະກວດກາແຕ່ລະຂັ້ນ

**ມາດຕາ 14** ໜ້າທີ່ ຂອງຄະນະກວດກາພັກ, ອົງການກວດກາລັດ ແຕ່ລະຂັ້ນ

1. ຮັບ ແລະ ຄົ້ນຄວ້າພິຈາລະນາແກ້ໄຂຄໍາຮ້ອງຟ້ອງ ຕໍ່ການຈັດຕັ້ງພັກ ແລະ ສະມາຊິກພັກ ທີ່ຂຶ້ນກັບການຄຸ້ມຄອງ ຂອງຄະນະພັກຂັ້ນຕົນ;

2. ຮັບ ແລະ ຄົ້ນຄວ້າພິຈາລະນາແກ້ໄຂຄໍາຮ້ອງທຸກ ຂອງການຈັດຕັ້ງພັກ, ສະມາຊິກພັກ ກ່ຽວກັບການລົງວິໄນພາຍໃນພັກ ຕໍ່ການຈັດຕັ້ງພັກ ທີ່ຂຶ້ນກັບການຄຸ້ມຄອງຂອງຄະນະພັກຂັ້ນຕົນ;

3. ຮັບ ແລະ ຄົ້ນຄວ້າພິຈາລະນາແກ້ໄຂຄໍາສະເໜີຂອງການຈັດຕັ້ງ ຫຼື ພົນລະເມືອງ ຕໍ່ການປະຕິບັດພາລະບົດບາດຂອງອົງການລັດບໍລິຫານ, ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດ ທີ່ຂຶ້ນກັບສິດຄຸ້ມຄອງຂອງອົງການປົກຄອງຂັ້ນຕົນ ແລະ ຄໍາສະເໜີ ທີ່ອົງການບໍລິຫານລັດ ຂັ້ນລຸ່ມຖັດຕົນ ໄດ້ແກ້ໄຂແລ້ວ ທີ່ເຫັນວ່າຍັງບໍ່ທັນຖືກຕ້ອງ;

4. ດໍາເນີນການເກັບກໍາຂໍ້ມູນ, ຫຼັກຖານ ກ່ຽວກັບຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີໃຫ້ຮັດກຸມ, ຊັດເຈນ, ຄົບຖ້ວນ, ພາວະວິໄສ, ຖືກກັບສະພາບຄວາມເປັນຈິງ ແລະ ທັນເວລາ;

5. ດໍາເນີນການກວດກາຕາມຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ທີ່ຂຶ້ນກັບການຄຸ້ມຄອງ ຂອງຄະນະພັກ ແລະ ອົງການປົກຄອງຂັ້ນຕົນ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ດໍາເນີນການຄົ້ນຄວ້າພິຈາລະນາ ເມື່ອເຫັນວ່າເນື້ອໃນຄໍາຮ້ອງ ມີການພົວພັນກັບຫຼາຍພາກສ່ວນ ແລະ ມີຄວາມຫຍຸ້ງຍາກ, ສັບສົນ;

7. ສົ່ງ ແລະ ຕິດຕາມສໍານວນ ຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ທີ່ບໍ່ນອນຢູ່ໃນຄວາມຮັບຊອບ ແລະ ພາລະບົດບາດ ຂອງຕົນໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງພິຈາລະນາແກ້ໄຂ;

8. ແຈ້ງຜົນການຄົ້ນຄວ້າພິຈາລະນາແກ້ໄຂ ເປັນລາຍລັກອັກສອນໃຫ້ເຈົ້າຂອງຄໍາຮ້ອງຮັບຊາບ;

9. ສະຫຼຸບຜົນການກວດກາຕາມຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ພ້ອມທັງສະເໜີມາດຕະການ ແລະ ວິທີການແກ້ໄຂ ໃຫ້ຄະນະພັກ, ອົງການປົກຄອງ ພິຈາລະນາຕົກລົງ;

10. ຕິດຕາມຊຸກຍູ້ການປະຕິບັດ ຜົນການຕົກລົງແກ້ໄຂຂອງຄະນະພັກ, ອົງການປົກຄອງ ໃຫ້ຖືກຕ້ອງ ແລະ ທັນກຳນົດເວລາ;

11. ຄຸ້ມຄອງສຳນວນ ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ;

12.ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 15 ສິດ ຂອງຄະນະກວດກາພັກ, ອົງການກວດກາລັດ ແຕ່ລະຂັ້ນ**

1. ທວງເອົາເອກະສານ, ຂໍ້ມູນ, ຫຼັກຖານ ຈາກບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

2. ຮຽກເຊີນການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງມາລາຍງານໃຫ້ຂໍ້ມູນ, ອະທິບາຍ, ຊີ້ແຈງ ຫຼື ດຳເນີນການໄກ່ເກ່ຍ ລະຫວ່າງ ຄູ່ກໍລະນີ ຫາກມີເງື່ອນໄຂ;

3. ສະເໜີຂັ້ນເທິງຕົກລົງດຳເນີນການກວດກາ ຕາມເນື້ອໃນ ຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ;

4. ສະເໜີ ໃຫ້ຄະນະພັກຂັ້ນຕົນ ຫຼື ຄະນະພັກ ຂັ້ນລຸ່ມ ລົບລ້າງ ຫຼື ປ່ຽນແປງຮູບການລົງວິໄນ ຕໍ່ການຈັດຕັ້ງພັກ ແລະ ສະມາຊິກພັກ ທີ່ບໍ່ຖືກຕ້ອງຕາມກົດລະບຽບຂອງພັກ;

5. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

## ໝວດທີ VI
## ສິດ ແລະ ພັນທະ ສຳລັບບຸກຄົນທີ່ກ່ຽວຂ້ອງ

**ມາດຕາ 16 ສິດຂອງຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ**

1. ຍື່ນຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ດ້ວຍຕົນເອງ ຫຼື ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ;

2. ໄດ້ຮັບການປົກປ້ອງ ຈາກການບັງຄັບ, ນາບຂູ່ ແລະ ໄດ້ຮັບການຮັກສາເປັນຄວາມລັບ ໃນສິ່ງທີ່ຕົນໄດ້ລາຍງານ ລວມທັງຊື່-ນາມສະກຸນ, ທີ່ຢູ່, ນາມປາກກາ ແລະ ອື່ນໆ;

3. ໄດ້ຮັບການຟື້ນຟູຄືນກ່ຽວກັບສິດຂອງຕົນທີ່ຖືກລະເມີດ ແລະ ໄດ້ຮັບການໃຊ້ແທນຄ່າເສຍຫາຍ ຈາກຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ;

4. ຖອນຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ ຂອງຕົນໃນທຸກຂັ້ນຕອນ ຂອງການພິຈາລະນາແກ້ໄຂ;

5. ໄດ້ຮັບການແນະນຳ, ຮັບຊາບຜົນຂອງການແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີຢ່າງເປັນລາຍລັກອັກສອນ ຈາກອົງການທີ່ກ່ຽວຂ້ອງ;

6. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

**ມາດຕາ 17 ພັນທະຂອງຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ**

1. ແຈ້ງຊື່, ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ, ເບີໂທລະສັບຂອງຕົນ ຢ່າງຖືກຕ້ອງຊັດເຈນ ໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ;

2. ສະເໜີ, ຊີ້ແຈງ, ອະທິບາຍ ກ່ຽວກັບເນື້ອໃນຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີຂອງຕົນໃຫ້ຈະແຈ້ງ, ຖືກຕ້ອງຕາມຄວາມຈິງ ພ້ອມທັງສະໜອງຂໍ້ມູນ, ຫຼັກຖານໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ທັນເວລາ;

3. ຮັບຜິດຊອບຕໍ່ເນື້ອໃນຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ, ຂໍ້ມູນ, ຫຼັກຖານທີ່ຕົນນໍາມາສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

4. ປະຕິບັດຕາມການເຊີນ ຂອງອົງການທີ່ກ່ຽວຂ້ອງ ຕາມກໍານົດເວລາ ແລະ ສະຖານທີ່, ໃນກໍລະນີທີ່ບໍ່ປະຕິບັດຕາມການເຊີນເຖິງສາມຄັ້ງຕິດຕໍ່ກັນ ໂດຍບໍ່ມີເຫດຜົນພຽງພໍ ຖືວ່າຜູ້ກ່ຽວບໍ່ໃຫ້ຄວາມຮ່ວມມືຕໍ່ເຈົ້າໜ້າທີ່;

5. ປະພຶດຕົວໃຫ້ເໝາະສົມ ແລະ ເຄົາລົບກົດລະບຽບຂອງອົງການຈັດຕັ້ງທີ່ເຊີນ;

6. ປະຕິບັດຂໍ້ຕົກລົງ ກ່ຽວກັບຜົນຂອງການຄົ້ນຄວ້າແກ້ໄຂຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ທີ່ມີຜົນສັກສິດທາງດ້ານກົດໝາຍ;

7. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 ສິດຂອງຜູ້ຖືກຮ້ອງຟ້ອງ, ຖືກຮ້ອງທຸກ ແລະ ຜູ້ຖືກສະເໜີ**

1. ຮັບຊາບກ່ຽວກັບເນື້ອໃນຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ທີ່ຖືກກ່າວຫາໃສ່ຕົນ;

2. ປົກປ້ອງຕົນເອງ ດ້ວຍການລາຍງານນໍາເອົາຂໍ້ມູນ, ຫຼັກຖານ ທີ່ຖືກຕ້ອງມາຢັ້ງຢືນ ແລະ ໃຫ້ຄໍາຊີ້ແຈງ;

3. ໄດ້ຮັບການຟື້ນຟູສິດ, ກຽດສັກສີ ແລະ ຜົນປະໂຫຍດອື່ນໆ ທີ່ຖືກເສຍຫາຍ ຈາກການຮ້ອງຟ້ອງ, ຮ້ອງທຸກ ແລະ ສະເໜີ ທີ່ບໍ່ມີມູນຄວາມຈິງ;

4. ສະເໜີ ໃຫ້ອົງການທີ່ກ່ຽວຂ້ອງ ນໍາໃຊ້ມາດຕະການ ຕໍ່ຜູ້ຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ສະເໜີ ທີ່ບໍ່ມີມູນຄວາມຈິງນັ້ນ ຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ;

5. ຮັບຊາບຜົນການຄົ້ນຄວ້າ, ແກ້ໄຂຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ຢ່າງເປັນລາຍລັກອັກສອນ ຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 19 ພັນທະຂອງ ຜູ້ຖືກຮ້ອງຟ້ອງ, ຮ້ອງທຸກ ແລະ ຜູ້ຖືກສະເໜີ**

1. ຊີ້ແຈງ, ອະທິບາຍ ກ່ຽວກັບບັນຫາທີ່ຖືກຮ້ອງຟ້ອງ, ຮ້ອງທຸກ ແລະ ຖືກສະເໜີ, ພ້ອມທັງສະໜອງຂໍ້ມູນ, ຫຼັກຖານ ທີ່ຖືກຕ້ອງໃຫ້ແກ່ອົງການທີ່ກ່ຽວຂ້ອງ ຢ່າງຄົບຖ້ວນ ແລະ ທັນເວລາ;

2. ປະຕິບັດຕາມການເຊີນ ຂອງອົງການທີ່ກ່ຽວຂ້ອງ, ໃນກໍລະນີ ທີ່ບໍ່ປະຕິບັດຕາມການເຊີນເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ຜູ້ກ່ຽວຕ້ອງຮັບຜິດຊອບຕາມກົດໝາຍ;

3. ປະພຶດຕົວໃຫ້ເໝາະສົມ ແລະ ເຄົາລົບກົດລະບຽບ ຂອງອົງການທີ່ມີໜ້າທີ່ຄົ້ນຄວ້າພິຈາລະນາແກ້ໄຂຄໍາຮ້ອງຟ້ອງ-ຮ້ອງທຸກ ແລະ ຄໍາສະເໜີ;

4. ປະຕິບັດຕາມຂໍ້ຕົກລົງກ່ຽວກັບ ການແກ້ໄຂຄໍາຮ້ອງຟ້ອງ, ຮ້ອງທຸກ ແລະ ຄໍາສະເໜີ ທີ່ມີຜົນສັກສິດ ທາງດ້ານກົດໝາຍ ຢ່າງເຂັ້ມງວດ;

5. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ VII
## ການປົກປ້ອງ, ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20 ການປົກປ້ອງ**

ລັດ ປົກປ້ອງພະນັກງານທີ່ເຮັດວຽກງານດັ່ງກ່າວ, ຜູ້ຮ້ອງຟ້ອງ, ຜູ້ຮ້ອງທຸກ, ຜູ້ສະເໜີ, ຜູ້ຖືກຮ້ອງຟ້ອງ, ຜູ້ຖືກຮ້ອງທຸກ ແລະ ຜູ້ຖືກສະເໜີ ລວມທັງຜູ້ເຂົ້າຮ່ວມເຊັ່ນ: ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນຂ່າວສານ, ຜູ້ຖືກເສຍຫາຍ, ພະຍານ, ຜູ້ຊ່ຽວຊານ ແລະ ຄອບຄົວຂອງຜູ້ກ່ຽວ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະຫຼະພາບ, ກຽດຊື່ສຽງ ຫຼື ຊັບສິນ.

**ມາດຕາ 21 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ກຳນົດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມລະບຽບການ.

**ມາດຕາ 22 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ກຳນົດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ຄະນະກວດກາພັກ, ອົງການກວດກາລັດແຕ່ລະຂັ້ນ ມີຄວາມຮັບຜິດຊອບ ໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ແລະ ປະຕິບັດຂໍ້ກຳນົດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກວດກາສູນກາງພັກ**

ບອ ບຸນທອງ ຈິດມະນີ